ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈໍາ

ເລກທີ 129 /ຄປຈ.ຕລ
ນະຄອນຫຼວງວຽງຈັນ, ວັນທີ 17 / 05 / 21

**ມະຕິ**
**ຂອງຄະນະປະຈໍາສະພາແຫ່ງຊາດ**
**ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ**
**ສະພາແຫ່ງຊາດລາວ ແລະ ສະພາອໍານາດປະຊາຊົນແຫ່ງຊາດ ແຫ່ງ ສ.ກູບາ**

---

- ອີງຕາມການເຫັນດີຂອງກອງປະຊຸມຄັ້ງປະຖົມມະລືກ ຂອງຄະນະປະຈໍາສະພາແຫ່ງຊາດ ຊຸດທີ IX, ຄັ້ງວັນທີ 21-23 ເມສາ 2021.
- ອີງຕາມໜັງສືສະເໜີຂອງກໍາມາທິການການຕ່າງປະເທດ ສະບັບເລກທີ 79/ກຕທ, ລົງວັນທີ 4/5/2021.

ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ຄວາມສາມັກຄີທີ່ເປັນມູນເຊື້ອ ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາອໍານາດປະຊາຊົນແຫ່ງຊາດ ແຫ່ງ ສ.ກູບາ.

**ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາອໍານາດປະຊາຊົນແຫ່ງຊາດ ແຫ່ງ ສ.ກູບາ, ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ຈະເລີນ ເຢຍປາວເຮີ, ຮອງປະທານສະພາແຫ່ງຊາດ, ສສຊ ເຂດ 10 ແຂວງວຽງຈັນ, ເປັນປະທານ;
2. ທ່ານ ພົຈອ. ລົມວັນ ທໍາມາໄຊ, ຮອງປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສສຊ ເຂດ 18 ແຂວງໄຊສົມບູນ, ເປັນຮອງປະທານ;
3. ທ່ານ ຄໍາປະສົງ ລາດຊະຈັກ, ຮອງປະທານກໍາມາທິການຍຸຕິທໍາ, ສສຊ ເຂດ 17 ແຂວງອັດຕະປື, ເປັນຄະນະ;
4. ທ່ານ ນາງ ສົມປະເສີດ ສີຫາລາດ, ສສຊ ເຂດ 1 ນະຄອນຫຼວງວຽງຈັນ, ເປັນຄະນະ;
5. ທ່ານ ກົງເພັດ ແກ້ວບົວພາ, ສສຊ ເຂດ 3 ແຂວງຫຼວງນໍ້າທາ, ເປັນຄະນະ;
6. ທ່ານ ວິລະພັນ ສີລິທໍາ, ສສຊ ເຂດ 5 ແຂວງບໍ່ແກ້ວ, ເປັນຄະນະ;
7. ທ່ານ ບຸນຕາ ອ່ອນນາວົງ, ສສຊ ເຂດ 7 ແຂວງໄຊຍະບູລີ, ເປັນຄະນະ;
8. ທ່ານ ລໍາໄມ ກຸດລາວົງ, ສສຊ ເຂດ 10 ແຂວງວຽງຈັນ, ເປັນຄະນະ;

| | | |
|---|---|---|
| 9. ທ່ານ ພົອ. ຄໍາສາຍ ພັນດານຸວົງ, | ສສຊ ເຂດ 11 ແຂວງບໍລິຄໍາໄຊ, | ເປັນຄະນະ; |
| 10. ທ່ານ ມາຍຟອງ ມາຍຊາຍ, | ສສຊ ເຂດ 12 ແຂວງຄໍາມ່ວນ, | ເປັນຄະນະ; |
| 11. ທ່ານ ນາງ ໄຊລິນຊື່ນ ໂພທິສານ, | ສສຊ ເຂດ 13 ແຂວງສະຫວັນນະເຂດ, | ເປັນຄະນະ. |

**ມາດຕາ 2** ບັນດາສະມາຊິກສະພາແຫ່ງຊາດ, ບັນດາກໍາມາທິການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ ເປັນຢ່າງດີ.

**ມາດຕາ 3** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈໍາສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**